Savan PAD ຈົດໝາຍແຈ້ງຂ່າວ

30 ມິຖຸນາ, 2019

3

## ໝາກຜົນຂອງການເຮັດນາແຊງປີ 2018-2019, ວຽກດ້ານສົ່ງເສີມການປູກເຂົ້າ

ໃນກິດຈະກຳດ້ານການປູກຝັງຂອງໂຄງການ Savan PAD, ແມ່ນໄດ້ແນໃສ່ກິດຈະກຳດັ່ງນີ້: ເຊັ່ນ ການສຳມະນາກ່ຽວກັບເຕັກນິກພື້ນຖານຂອງການປູກເຂົ້າແມ່ນປະກອບດ້ວຍການປ່ຽນແນວພັນເຂົ້າ, ການນຳໃຊ້ຝຸ່ນປຸ໋ຍໃຫ້ຖືກຕ້ອງຕາມໄລຍະ ແລະ ຈຳນວນທີ່ເໝາະສົມລວມໄປເຖິງການຄວບຄຸມພະຍາດແມງໄມ້ອີກດ້ວຍ. ນີ້ແມ່ນຈຸດປະສົງຂອງການເພີ່ມຜົນຜະລິດເຂົ້າ ແລະ ຫຼຸດຜ່ອນຕົ້ນທຶນການຜະລິດ.

ໃນບົດລາຍງານສະບັບນີ້ພວກເຮົາຈະລາຍງານກິດຈະກຳ ແລະ ຜົນໄດ້ຮັບໃນການສົ່ງເສີມການປູກຝັງ ໂດຍສະເພາະດ້ານການປູກເຂົ້າໃນລະດູແລ້ງຂອງປີ 2018-2019 ນີ້.

## 1)ກິດຈະກຳ:

### ສ້າງຄວາມເຂັ້ມແຂງດ້ານເຕັກນິກການປູກເຂົ້າ-ໂດຍນະໂຍບາຍໃຫ້ກູ້ຢືມແນວພັນເຂົ້າ ແລະ ປຸ໋ຍ.

<ຈຸດສຳຄັນທີ່ພົ້ນເດັ່ນ>



ພິທີມອບຮັບເມັດພັນເຂົ້າ ແລະປຸ໋ຍ

- ປ່ອຍນະໂຍບາຍໃຫ້ກູ້ຢືມແນວພັນເຂົ້າ ແລະ ປຸ໋ຍ ພ້ອມກັນນັ້ນຍັງຈັດຝຶກອົບຮົມ "1 ຊຸດ" ເພື່ອເຜີຍແຜ່ເຕັກນິກ ແລະ ສົ່ງເສີມການປູກ
- ຊາວນາແຕ່ລະຄົນສາມາດສະມັກເຂົ້າຮັບນະໂຍບາຍໄດ້ຖ້າຫາກວ່າເຂົາເຈົ້າຜ່ານການເຂົ້າຝຶກອົບຮົມແລ້ວ.
- ການຝຶກອົບຮົມເຕັກນິກພື້ນຖານເຊັ່ນວ່າ:ການຄັດເລືອກແນວພັນເຂົ້າ,ການໃສ່ປຸ໋ຍຮອງພື້ນ,ການປັກດຳ/ການຫວ່ານ,ການໃສ່ປຸ໋ຍເລັ່ງຄັ້ງທີ 1 ແລະ 2
- ຫຼັງຈາກໄດ້ປັກດຳ/ຫວ່ານແລ້ວ ມີວິຊາການພາກສະໜາມຕິດຕາມເບິ່ງນາເຂົ້າ ແລະ ແນະນຳການຫວ່ານປຸ໋ຍ,ການຕິດຕາມການເຕີບໂຕຂອງເຂົ້າ ແລະ ການຄວບຄຸມພະຍາດແມງໄມ້.
- ການເກັບເງິນຄືນຈາກນະໂຍບາຍກູ້ຢືມຫຼັງການເກັບກ່ຽວ
- ເງິນທີ່ເກັບໄດ້ແມ່ນພະແນກກະສິກຳເປັນຜູ້ເກັບຮັກສາເພື່ອເປັນທຶນໃນນະໂຍບາຍຄັ້ງຕໍ່ໄປ



① ການເກັບເງິນຄືນ



② ການຝຶກອົບຮົມເຕັກນິກພື້ນຖານ



③ ການແຈກຢາຍເມັດພັນເຂົ້າ ແລະ ປຸ໋ຍ ຫຼັງການຝຶກອົບຮົມ



④ ພະນັກງານວິຊາການຕິດຕາມເບິ່ງນາເຂົ້າ



⑤ ການເກັບກ່ຽວ



⑥ ການເກັບເງິນຄືນ

### ຄຳຄິດເຫັນຈາກພະນັກງານຝ່າຍລັດ:ເຄັດລັບ ການເຜີຍແຜ່(ເຕັກນິກການປູກເຂົ້າ)ໃຫ້ຊາວນາ.

ປົກກະຕິແລ້ວການໃສ່ປຸ໋ຍແມ່ນ3ຄັ້ງ( ປຸ໋ຍຮອງພື້ນ,ປຸ໋ຍເລັ່ງຄັ້ງທີ1, ປຸ໋ຍເລັ່ງຄັ້ງທີ2). ເພື່ອໃຫ້ຊາວນາແນ່ໃຈການເຂົ້າຝຶກອົບຮົມ, ພວກເຮົາໄດ້ແຈກຢາຍປຸ໋ຍບໍ່ແມ່ນແຕ່ຄັ້ງດຽວແຕ່ພວກເຮົາແຈກຢາຍທຸກຄັ້ງທີ່ຮອດກຳນົດເວລາ ແລະ ຈັດການຝຶກອົບຮົມ



ທ່ານ ຈັນລະຄອນ ໄຊຍະລາດ
ຮັບຜິດຊອບວຽກສົ່ງເສີມ(ການປູກເຂົ້າ)
ພະແນກ ກະສິກຳ ແລະ ປ່າໄມ້
ແຂວງສະຫວັນນະເຂດ

## 2) ຜົນໄດ້ຮັບ

### ①ການເຂົ້າຮ່ວມຈາກບັນດາຊາວນາ

**16%** ຂອງຊາວນາ
(ທັງໝົດໃນບ້ານເປົ້າໝາຍ)ໄດ້ເຂົ້າຮ່ວມ

ຊາວນາທີ່ໄດ້ເຂົ້າຮ່ວມ **263** ຄອບຄົວ

ຈໍານວນລວມຂອງຊາວນາໃນກຸ່ມເປົ້າໝາຍປະມານ **1,600** ຄອບຄົວ

ຜົນຜະລິດໄດ້ເພີ່ມຂຶ້ນ
**27%** ໂດຍສະເລ່ຍ

### ②ຜົນຜະລິດໄດ້ເພີ່ມຂຶ້ນ (ຜົນຜະລິດຕໍ່ຄອບຄົວ)

ຜົນຜະລິດໂດຍສະເລ່ຍ(ກິໂລ/ຄອບຄົວ)




### ③ການປຽບທຽບລະຫວ່າງຊາວນາທີ່ເຂົ້າຮ່ວມ ແລະ ຊາວນາທີ່ບໍ່ໄດ້ເຂົ້າຮ່ວມໂຄງການ

ຜ່ານການວິໄຈແບບສຸ່ມຕົວຢ່າງໃນເມືອງໄຊບູລີ(ໂຄງການຕົ້ນແຫນ ແລະ ໂຄງການສົມສະອາດ),ໄດ້ສະແດງໃຫ້ເຫັນວ່າອັດຕາການເພີ່ມຜົນຜະລິດຂອງຊາວນາທີ່ໄດ້ເຂົ້າຮ່ວມໂຄງການນີ້ສູງກ່ວາ (ຊາວນາທີ່ບໍ່ໄດ້ເຂົ້າຮ່ວມໂຄງການ).

| ໂຄງການເປົ້າໝາຍ | ລາຍລະອຽດ | ຜົນຜະລິດ(ໂຕນ/ຮຕ) | | ອັດຕາການເພີ່ມຂຶ້ນ |
|---|---|---|---|---|
| | | ນາແຊງປີ 2017-18 | ນາແຊງປີ 2018-19 | |
| ໂຄງການຕົ້ນແຫນ | ຊາວນາທີ່ເຂົ້າຮ່ວມໂຄງການ | 3.68 | 4.55 | 23.6% |
| | ຊາວນາທີ່ບໍ່ໄດ້ເຂົ້າຮ່ວມໂຄງການ | 5.65 | 5.06 | -10.4% |
| ໂຄງການສົມສະອາດ | ຊາວນາທີ່ເຂົ້າຮ່ວມໂຄງການ | 5.21 | 5.94 | 14.0% |
| | ຊາວນາທີ່ບໍ່ໄດ້ເຂົ້າຮ່ວມໂຄງການ | 4.93 | 5.13 | 4.1% |

### <ສະພາບການເກັບເງິນຄືນ>

ເງິນທີ່ລົງທຶນໃນນະໂຍບາຍກູ້ຢືມນີ້ແມ່ນເປັນທຶນສົມທົບລະຫວ່າງຝ່າຍລາວ ແລະ ຝ່າຍຍີ່ປຸ່ນຈໍານວນທັງໝົດແມ່ນ 33,000 ໂດລາ ເພື່ອໃຊ້ເຂົ້າໃນການຊື້ແນວພັນເຂົ້າ ແລະ ປຸ໋ຍໃຫ້ຊາວນາໄດ້ກູ້ຢືມ(ຫຼັງຈາກທີ່ໄດ້ເກັບກ່ຽວຜົນຜະລິດແລ້ວ) ໄດ້ເກັບກໍາເງິນຄືນຈາກຊາວນາໄດ້ແຕ່ຈໍານວນ 32,500 ໂດລາ ຫຼືເທົ່າກັບ 98% ຂອງຈໍານວນທີ່ລົງທຶນໃຫ້ກູ້ຢືມທັງໝົດ. ເງິນທຶນທີ່ເກັບຄືນມາໄດ້ແມ່ນຈະໄດ້ຖືກນໍາໃຊ້ໃນນະໂຍບາຍຂອງລະດູການຜະລິດຄັ້ງຕໍ່ໄປ

### ສຽງຈາກຊາວນາ

"ສໍາລັບນາແລ້ງປີນີ້ໄດ້ລົ້ນທຸກປີ, ແຕ່ເກົ່ານາຂ້ອຍໄດ້ເຂົ້າ 70-75ສອບມາປີນີ້ຂ້ອຍໄດ້120 ສອບ ຍ້ອນວ່າການປ່ຽນແນວພັນໃໝ່,ວິທີການໃສ່ຝຸ່ນປຸ໋ຍສູດ 15-15-15 ເປັນປຸ໋ຍຮອງພື້ນ ເຊິ່ງແຕ່ກ່ອນບໍ່ເຄີຍເຮັດແບບນີ້ເພາະທີ່ເຄີຍເຮັດແມ່ນໃສ່ແຕ່ສູດ46-0-0 ແຕ່ວ່າໃສ່ຕອນເຂົ້າໃກ້ອອກຮວງພຸ້ນ, ນອກຈາກນັ້ນຍັງຂຶ້ນກັບການຄິດໄລ່ປະລິມານການໃສ່ປຸ໋ຍນໍາ ເຊິ່ງໂຄງການເພິ່ນໄດ້ຝຶກອົບຮົມໃຫ້"

"ຖ້າວ່າມີນະໂຍບາຍແບບນີ້ໃນປີຕໍ່ໄປຂ້ອຍເຊື່ອວ່າຊາວນາໝົດບ້ານຈະພາກັນເຂົ້າຮ່ວມແນ່ນອນ"

ທ່ານສົມມາ
ຊາວນາບ້ານຫ້ວຍແຮ່
ເມືອງໄຊບູລີ



### <ກິດຈະກໍາທີ່ຈະລາຍງານໃນສະບັບຕໍ່ໄປແມ່ນ:ດ້ານການຕະຫຼາດພາກສະໜາມ>

ໃນດ້ານການຕະຫຼາດພາກສະໜາມ,ພວກເຮົາກໍາລັງສົ່ງເສີມຜະລິດຕະພັນພືດຜັກຮ່ວມກັບຊາວນາເພື່ອເພີ່ມລາຍຮັບໃຫ້ຊາວກະສິກອນ. ພວກເຮົາຈະສະໜັບສະໜູນທ່ານເລື່ອງ"ຜັກຊະນິດໃດທີ່ເຈົ້າຈະປູກເພື່ອເປັນສິນຄ້າ" "ພວກເຮົາຈະນໍາໄປຂາຍຢູ່ໃສ".

ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກໍາ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກໍາ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)